ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ແຂວງອັດຕະປື

ພະແນກອຸດສາຫະກໍາ ແລະ ການຄ້າ

(ຄະນະກໍາມະການປະມູນຂາຍໄມ້ຍຶດຂັ້ນແຂວງ)

ເລກທີ..1368.../ອຄ.ອປ

ອັດຕະປື, ວັນທີ 24 ທັນວາ 2018

## ແຈ້ງການປະມູນ

ເຖິງ : ຜູ້ອໍານວຍການໂຮງງານປຸງແຕ່ງໄມ້ ແລະໂຮງງານເຟີນີເຈີໄມ້ສໍາເລັດຮູບ ພາຍໃນແຂວງ ແລະຕ່າງແຂວງທົ່ວປະເທດ.

ເລື່ອງ : ເຊີນເຂົ້າຮ່ວມປະມູນຊື້ໄມ້ຂ້ອງໄມ້ຍຶດຂອງແຂວງ ຈໍານວນ 06 ບັນຊີ ເທົ່າກັບ 3.289 ທ່ອນ/ຕັບ/ເສັ້ນ/ແຜ່ນ, ບໍລິມາດ : 61,991 ມ3 ( ຫົກສິບເອັດເກົ້າເກົ້າໜຶ່ງແມັດກ້ອນ ).

- ອີງຕາມ ຄໍາສັ່ງ ເລກທີ່ 15/ນຍ, ລົງວັນທີ່ 13/05/2016 ກ່ຽວກັບການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ, ກວດກາ ການຂຸດຄົ້ນໄມ້, ເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້.
- ອີງຕາມ ຂໍ້ຕົກລົງ ເລກທີ 0918/ອຄ.ຈພງ, ວັນທີ 10 ກໍລະກົດ 2018 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະແນກອຸດສາຫະກໍາ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ.
- ອີງຕາມ ຄໍາສັ່ງແນະນໍາເລກທີ 0336/ອຄ.ກຂອ, ວັນທີ 13 ມີນາ 2017 ວ່າດ້ວຍການແນະນໍາການຈັດຕັ້ງປະຕິບັດປະມູນຂາຍໄມ້ຍຶດເປັນຂອງລັດ.
- ອີງຕາມ ສະໂນດນໍາສົ່ງບັນຊີໄມ້ສະໜາມ II ຂອງພະແນກການເງິນແຂວງ ສະບັບເລກທີ 714 ແລະ 933/ກງຂ, ລົງວັນທີ 10 ກັນຍາ 2018 ແລະ ລົງວັນທີ 19 ທັນວາ 2018.

ຄະນະກໍາມະການປະມູນຂາຍໄມ້ຍຶດຂັ້ນແຂວງ ( ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງອັດຕະປື ) ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານຜູ້ອໍານວຍການໂຮງງານປຸງແຕ່ງໄມ້ ແລະ ໂຮງງານເຟີນີເຈີ ໄມ້ສໍາເລັດຮູບ ພາຍໃນແຂວງແລະຕ່າງແຂວງທົ່ວປະເທດ ເພື່ອເຂົ້າປະມູນຊື້ໄມ້ຍຶດຂອງແຂວງອັດຕະປື ເຊິ່ງມີລາຍລະອຽດ ດັ່ງນີ້ :

I. ໄມ້ຍຶດຂອງແຂວງ ທີ່ຈະປະມູນຂາຍ ມີຈໍານວນທັງໝົດ 06 ບັນຊີ ເທົ່າກັບ 3.289 ທ່ອນ/ຕັບ/ເສັ້ນ/ແຜ່ນ, ບໍລິມາດ : 61,991 ແມັດກ້ອນ ( ຫົກສິບເອັດຈຸດເກົ້າເກົ້າໜຶ່ງແມັດກ້ອນ ).ໃນນັ້ນມີ :

- ໄມ້ດູ່ ມີບໍລິມາດທັງໝົດ : 57,347 ( ຫ້າສິບເຈັດຈຸດສາມສີ່ເຈັດ )ແມັດກ້ອນ. ໃນນັ້ນ
    - \+ ໄມ້ດູ່ທ່ອນ ມີບໍລິມາດຈໍານວນ : 3,591 ( ສາມຈຸດຫ້າເກົ້າໜຶ່ງ )ແມັດກ້ອນ.
    - \+ ໄມ້ດູ່ຕັບ ມີບໍລິມາດຈໍານວນ : 50,304 ( ຫ້າສິບຈຸດສາມສູນສີ່ )ແມັດກ້ອນ.
    - \+ ໄມ້ດູ່ເຄິ່ງສໍາເລັດຮູບ+ປັກເກ ມີບໍລິມາດຈໍານວນ : 3,452 ( ສາມຈຸດສີ່ຫ້າສອງ )ແມັດກ້ອນ.
- ໄມ້ປະດົງຕັບ ມີບໍລິມາດຈໍານວນ : 4,386 ( ສີ່ຈຸດສາມແປດຫົກ ) ແມັດກ້ອນ.
- ໄມ້ສັກປັກເກ ມີບໍລິມາດຈໍານວນ : 0,258 ( ສູນຈຸດສອງຫ້າແປດ ) ແມັດກ້ອນ. ລາຍລະອຽດແຕ່ລະບັນຊີດັ່ງນີ້ :

1. ບັນຊີເລກທີ 25/ຫກປມ, ລົງວັນທີ 17/07/2018 ຈໍານວນ 405 ເສັ້ນ/ແຜ່ນ, ບໍລິມາດ 3,240 ແມັດກ້ອນ ( ໄມ້ດູ່ຕັບ ) ຢູ່ຫ້ອງການກະສິກໍາ ແລະປ່າໄມ້ເມືອງສະໜາມໄຊ.
2. ບັນຊີເລກທີ 26/ຫກປມ, ລົງວັນທີ 17/07/2018 ຈໍານວນ 800 ທ່ອນ/ຕັບ, ບໍລິມາດ 34,990 ແມັດກ້ອນ ( ໄມ້ດູ່ ) ຢູ່ຫ້ອງການກະສິກໍາ ແລະປ່າໄມ້ເມືອງສະໜາມໄຊ.
3. ບັນຊີເລກທີ 364/ກກປຂ, ລົງວັນທີ 12/12/2018 ຈໍານວນ 1.070 ຕັບ/ເສັ້ນ/ແຜ່ນ, ບໍລິມາດ 10,818 ແມັດກ້ອນ ( ໄມ້ດູ່ ຕັບ/ຊິ້ນສ່ວນ) ຢູ່ສາງພາສີດ່ານສາກົນພູເກືອ.
4. ບັນຊີເລກທີ 365/ກກປຂ, ລົງວັນທີ 12/12/2018 ຈໍານວນ 197 ຕັບ, ບໍລິມາດ 1,079 ແມັດກ້ອນ (ໄມ້ດູ່ ຕັບ) ຢູ່ສາງພາສີດ່ານສາກົນພູເກືອ.

4. ບັນຊີເລກທີ 244/ກກປມ, ລົງວັນທີ 25/07/2018 ຈຳນວນ 1.939 ຕົບ/ໂຕ/ເສັ້ນ, ບໍລິມາດ 13,288 ແມັດກ້ອນ (ໄມ້ດູ່, ປະດົງ, ຂະຍຸງ ແລະໄມ້ສັກ) ຢູ່ສາງພາສີດ່ານສາກົນພູເກືອ.

II. ເງື່ອນໄຂເພື່ອເຂົ້າຮ່ວມການປະມູນຊື້ໄມ້ຍຶດຂອງແຂວງ.

1. ຜູ້ທີ່ມີໂຮງງານປຸງແຕ່ງໄມ້, ເຟີນີເຈີປຸງແຕ່ງໄມ້ທີ່ມີທະບຽນຖືກຕ້ອງຕາມກົດໝາຍ ຂອງ ສປປລາວ ຢູ່ພາຍໃນແຂວງ ແລະ ຕ່າງແຂວງ ( ໃຫ້ສຳເນົາຄັດຕິດ ), ຕ້ອງເປັນໂຮງງານທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດ, ເປັນໂຮງງານທີ່ສາມາດປຸງແຕ່ງສຳເລັດຮູບໄດ້ ແລະ ບໍ່ຕັ້ງໃນ 03 ປະເພດປ່າ.
2. ຕ້ອງສາມາດຜະລິດເປັນຜະລິດຕະພັນສຳເລັດຮູບ ຕາມຂໍ້ຕົກລົງ ສະບັບເລກທີ 1833/ອຄ, ລົງວັນທີ 03 ຕຸລາ 2016 ແລະ ( ສະບັບປັບປຸງ ) ສະບັບເລກທີ 0002/ອຄ.ກຂອ, ລົງວັນທີ 03 ມັງກອນ 2018 ວ່າດ້ວຍການຮັບຮອງເອົາລາຍການຜະລິດຕະພັນໄມ້ ເພື່ອສົ່ງອອກ ແລະ ຫ້າມສົ່ງອອກ.
3. ເງື່ອນໄຂຜູ້ທີ່ມີສິດເຂົ້າຮ່ວມການປະມູນ ຕ້ອງແມ່ນຜູ້ອຳນວຍການ ຫຼື ຕົວແທນ ຂອງໂຮງງານປຸງແຕ່ງໄມ້ ທີ່ໄດ້ຮັບການແຕ່ງຕັ້ງມອບສິດ, ສາມາດຕັດສິນບັນຫາໃນການປະມູນໄດ້.
4. ຕ້ອງເປັນໂຮງງານປຸງແຕ່ງໄມ້ທີ່ມີຄວາມພ້ອມທາງດ້ານຖານະການເງິນ, ມີໃບຢັ້ງຢືນຖານະການເງິນຈາກທະນາຄານຕິດຄັດມາພ້ອມ.
5. ຕ້ອງແມ່ນໂຮງງານປຸງແຕ່ງໄມ້ ທີ່ບໍ່ມີໜີ້ສິນ ຄ້າພັນທະອາກອນ ຕ່າງໆກັບລັດ. ກໍລະນີຜູ້ຊະນະການປະມູນ ຫາກມີໜີ້ສິນນຳລັດ ຄະນະກຳມະການປະມູນຊື້ - ຂາຍໄມ້ຂັ້ນແຂວງ ແມ່ນຈະໄດ້ມີການຄົ້ນຄ້ວາພິຈາລະນາ.
6. ຜູ້ຊະນະການປະມູນ ຕ້ອງຖອກເງິນມັດຈຳ 10 % ກ່ອນຂໍຂໍ້ຕົກລົງອະນຸມັດຂາຍຂອງທ່ານເຈົ້າແຂວງ.

III. ວັນເວລາເປີດເປີດຂາຍຊອງປະມູນ.

ຜູ້ທີ່ສົນໃຈໃຫ້ເຂົ້າມາພົວພັນຊື້ຊອງປະມູນ ທີ່ ພະແນກອຸດສາຫະກຳ ແລະການຄ້າ ແຂວງອັດຕະປື ( ຂະແໜງການນຳເຂົ້າ ແລະສົ່ງອອກ ) ໃນໂມງລັດຖະການ.

- ກຳນົດວັນເວລາຂາຍຊອງປະມູນ ແມ່ນ 10 ວັນລັດຖະການ ( ນັບແຕ່ວັນທີ 24 ທັນວາ 2018 ຫາວັນທີ 07 ມັງກອນ 2019 ).
- ກຳນົດວັນເວລາມື້ເປີດຊອງປະມູນແມ່ນເວລາ 9 : 00 ໂມງເຊົ້າ ຂອງວັນທີ 08 ມັງກອນ 2019.
- ສະຖານທີ່ : ຫ້ອງປະຊຸມພະແນກອຸດສາຫະກຳ ແລະການຄ້າ ແຂວງອັດຕະປື.
- ລາຄາຊອງປະມູນ : 1.000.000 ກີບ/ຊອງ ( ສຳລັບຄ່າຊອງປະມູນນັ້ນ ແມ່ນບໍ່ໄດ້ສົ່ງຄືນ ).
- ກະລຸນາຖືຊອງປະມູນໄວ້ກັບຕົນເອງ ຈົນຮອດເວລາ 9 : 00 ໂມງເຊົ້າຂອງວັນທີ 08 ມັງກອນ 2019, ຈຶ່ງໃຫ້ມາມອບສົ່ງນຳຄະນະກຳມະການປະມູນຂາຍໄມ້ ທີ່ຫ້ອງປະຊຸມ : ພະແນກອຸດສາຫະກຳ ແລະການຄ້າ ແຂວງອັດຕະປື, ຖ້າກາຍຖືວ່າສະຫຼະສິດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອເຂົ້າຮ່ວມການປະມູນ ຕາມກຳນົດເວລາ ຂ້າງເທິງດ້ວຍ.

ໄປແທນ ຫົວໜ້າພະແນກອຸດສາຫະກຳ ແລະການຄ້າແຂວງ.
( ຄະນະກຳມະການປະມູນຂາຍໄມ້ຂັ້ນແຂວງ )

ສັນຕິໄຊ ສີລືໄຊ
SANTISAY SILEUSAY

ຕິດຕໍ່ພົວພັນ:

- ທ່ານ ພະທັດໄຊ 020 2229 2298
- ທ່ານ ບາງຖານດາວອນ 020 2242 3777
- ທ່ານ ທິດປະກາຍສີ 020 5553 4456